ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກອງປະຊຸມການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບຈາກພະຍາດ COVID-19




ໃນວັນທີ 20 ຕຸລາ 2020 ຜ່ານມານີ້, ທີ່ ຫ້ອງປະຊຸມສະໂມສອນໃຫຍ່ຂອງສະຖາບັນການທະນາຄານ. ກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບຈາກການລະບາດຂອງພະຍາດ COVID-19 ຂຶ້ນ, ໂດຍການເຂົ້າຮ່ວມເປັນປະທານຂອງທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການ (ທຫລ), ພ້ອມນີ້ກໍ່ມີບັນດາພະນັກງານຂັ້ນນຳ ແລະ ວິຊາການ ພາຍໃນ ທຫລ, ທະນາຄານ ທຸລະກິດລັດ ແລະ ສະຖາບັນການເງິນກ່ຽວຂ້ອງເຂົ້າຮ່ວມ.

ການລະບາດຂອງພະຍາດ COVID-19 ໄດ້ເລີ່ມແຜ່ລາມໃນທົ່ວໂລກ ນັບແຕ່ທ້າຍປີ 2019 ເປັນຕົ້ນມາ ແລະ ໄດ້ເຂົ້າມາລະບາດຢູ່ ສປປ ລາວ ໃນໄລຍະເດືອນ 3/2020 ຊຶ່ງໄດ້ສົ່ງຜົນກະທົບຕໍ່ເສດຖະກິດໃນຂະແໜງການຕ່າງໆທັງທາງກົງ ແລະ ທາງອ້ອມ ໂດຍສະເພາະຂະແໜງການຄ້າ, ບໍລິການ ແລະ ຂົນສົ່ງ ເປັນຕົ້ນແມ່ນ: ທຸລະກິດໂຮງແຮມ, ທ່ອງທ່ຽວ, ຮ້ານອາຫານ-ບັນເທີງ, ສາຍການບິນພາຍໃນ ແລະ ຕ່າງປະເທດ ແລະ ອື່ນໆ. ນອກຈາກນັ້ນ, ກໍຍັງສົ່ງຜົນກະທົບໃນທາງກົງ ແລະ ທາງອ້ອມຕໍ່ຜູ້ປະກອບການເຮັດໃຫ້ເກີດມີໜີ້ສິນກັບທະນາຄານ ແລະ ສະຖາບັນການເງິນ ຊຶ່ງບໍ່ສາມາດຊຳລະໜີ້ໄດ້ຕາມກຳນົດເວລາ. ສະນັ້ນ, ລັດຖະບານ ກໍຄື ທຫລ ຈຶ່ງໄດ້ຮັບຮອງກຳນົດນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບຈາກການລະບາດຂອງພະຍາດດັ່ງກ່າວ ສະບັບເລກທີ 238/ທຫລ, ລົງວັນທີ 26/3/2020 ເພື່ອຊ່ວຍລູກໜີ້ທີ່ໄດ້ຮັບຜົນກະທົບຈາກພະຍາດໃນຄັ້ງນີ້, ຊຶ່ງໃນນະໂຍບາຍຂອງ ທຫລ ທີ່ວາງອອກໄປນັ້ນ ກໍແມ່ນເປັນລັກສະນະຍືດຢຸ່ນ ແລະ ຊຸກຍູ້ໃຫ້ເຈົ້າໜີ້ ກໍຄືທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ມີນະໂຍບາຍຊ່ວຍເຫຼືອລູກໜີ້ຂອງຕົນ ເປັນຕົ້ນແມ່ນ ການເລື່ອນການຊຳລະໜີ້, ຫຼຸດອັດຕາດອກເບ້ຍ ແລະ ອື່ນໆ; ນະໂຍບາຍຂອງ ທຫລ ແມ່ນເປັນລັກສະນະຍືດຢຸ່ນບໍ່ໄດ້ເປັນການບັງຄັບໃນລັກສະນະຕາຍຕົວ ແລະ ບໍ່ໄດ້ກຳນົດເປົ້າໝາຍຜູ້ທີ່ໄດ້ຮັບຜົນກະທົບໄວ້ຢ່າງລະອຽດວ່າມີພາກສ່ວນໃດແນ່, ຈຶ່ງເຮັດໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກຈຳນວນໜຶ່ງ ໄດ້ກຳນົດນະໂຍບາຍພາຍໃນຂອງຕົນເອງ ແລະ ກຳນົດເປົ້າໝາຍລູກໜີ້ທີ່ຄາດວ່າໄດ້ຮັບຜົນກະທົບຕາມທີ່ໄດ້ກ່າວມາຂ້າງເທິງນັ້ນ ແລະ ບາງພາກສ່ວນກໍໄດ້ປະຕິເສດການຊ່ວຍເຫຼືອລູກໜີ້ ເປັນຕົ້ນແມ່ນ ຜູ້ທີ່ປະກອບອາຊີບອິດສະຫຼະ ຊຶ່ງໄດ້ຖືກຢຸດການປະຕິບັດວຽກງານຂອງຕົນ.

\# ຂ່າວ-ພາບ: ທ ສົມພົດ ທຳມະວົງ